


# ການປັບປຸງຂັ້ນຕອນການລົງທະບຽນ

## ຂໍ້ມູນສໍາລັບຄອບຄົວ

## ມີການປ່ຽນແປງຫຍັງແດ່?

ການປ່ຽນແປງຂັ້ນຕອນການລົງທະບຽນການຮຽນ ໃນຊັ້ນອະນຸບານ (Kindergarten) ເຖິງຊັ້ນປີ 12 (Year 12) ມີດັ່ງຕໍ່ໄປນີ້ ແລະ ນໍາໃຊ້ກັບການລົງທະບຽນເຂົ້າຮຽນໃນໂຮງຮຽນ ຫຼວງທັງໝົດ ເລີ່ມແຕ່ເທີມ 1 ປີ 2026.

### ການປັບປຸງການລົງທະບຽນຮຽນຢູ່ນອກທ້ອງ ຖິ່ນ

ໃນປີ 2025, ພວກເຮົາໄດ້ແນະນໍາບັນທັດຖານການຈັດລໍາ ດັບຄວາມສໍາຄັນຂອງການສະໝັກເຂົ້າຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນສໍາລັບນັກຮຽນທີ່ມີຄວາມ ຕ້ອງການດ້ານການຮຽນຮູ້ ແລະ ການເປັນຢູ່ທີ່ດີສະເພາະ, ອ້າຍນ້ອງຂອງນັກຮຽນທີ່ພວມຮຽນຢູ່ໃນປັດຈຸ ບັນ ແລະ ລູກໆຂອງພະນັກງານຂອງໂຮງຮຽນ.

ໃນປີ 2026, ການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນຍັງຈະ ຖືກຈັດລໍາດັບຄວາມສໍາຄັນສໍາລັບ:

- ນັກຮຽນຊາວອາບໍຣິຈິໂນລ ແລະ/ຫຼື ນັກຮຽນຊາວເກາະ ທໍເຣສເຕຣດ ເພື່ອຮັບຮູ້ເຖິງສາຍພົວພັນທາງວັດທະນະທໍາ, ຄອບຄົວ ແລະ ຍາດພີ່ນ້ອງ (kinship connections).
- ນັກຮຽນ Kindergarten ທີ່ເຂົ້າຮຽນໃໝ່ຊຶ່ງເຄີຍຮຽນໃນໂຮງຮຽນຕຽມອະນຸບານຂອງຣັດທີ່ຕັ້ງຢູ່ຮ່ວມກັບໂຮງຮຽນຫຼວງຂອງ ຣັດ NSW.

### ຄວາມຍືດຫຍຸ່ນທີ່ຫຼາຍຂຶ້ນສໍາລັບລູກໆຂອງສະມາ ຊິກກອງກໍາລັງປ້ອງກັນປະເທດ

ຂັ້ນຕອນການລົງທະບຽນເຂົ້າຮຽນພວມໄດ້ຮັບການປັບປຸງເພື່ອໃຫ້ແນ່ໃຈວ່າຂໍ້ກໍານົດການລົງທະບຽນເຂົ້າຮຽນຂອງລູກໆຂອງສະມາຊິກກອງກໍາລັງປ້ອງກັນປະເທດມີຄວາມຍືດຫຍຸ່ນຫຼາຍຂຶ້ນໃນລະຫວ່າງການຍົກຍ້າຍຖິ່ນຖານແລະໃນຂະນະທີ່ຫາທີ່ຢູ່ອາໄສ.

### ການຮັບຮູ້ kinship ຂອງຊາວອາບໍຣິຈິໂນລ ແລະ/ຫຼື ນັກຮຽນຊາວເກາະ ທໍເຣສເຕຣດ

ໂຮງຮຽນຈະມີຄວາມຍືດຫຍຸ່ນຫຼາຍຂຶ້ນໃນການລົງ  ທະບຽນນັກຮຽນຊາວອາບໍຣິຈິໂນລ ແລະ/ຫຼື ນັກຮຽນຊາວເກາະ ທໍເຣສເຕຣດ ລວມທັງ kinship connections, ຄວາມປອດໄພທາງດ້ານວັດທະນະທໍາ, ການເຂົ້າເຖິງການສຶກສາພາສາອາບໍຣິຈິໂນລ ແລະຄວາມຮັບຜິດຊອບທາງວັດທະນະທໍາເຊັ່ນ: Sorry Business.

### ຄວາມຕໍ່ເນື່ອງສໍາລັບນັກຮຽນທີ່ມີຈຸດບອບບາງຫຼາຍທີ່ສຸດ ຂອງພວກເຮົາ

ການຊີ້ນໍາສະເພາະສໍາລັບນັກຮຽນທີ່ໄດ້ຮັບການປະກັນຕົວ ແລະ ນັກຮຽນທີ່ຍ້າຍຈາກໂຮງຮຽນໃນສູນຍຸຕິທໍາແລະສູນຄວບຄຸມໂຕຂອງເຍົາວະຊົນ ແລະໃນຂະນະນີ້ໃບສະໝັກລົງທະບຽນໃນທ້ອງຖິ່ນສໍາລັບນັກຮຽນໃນປະເພດນີ້ຈະຖືກດໍາເນີນການ ພາຍໃນ 2 ມື້ຮຽນ.



NSW GOVERNMENT

## ຄຳຖາມທີ່ຖາມເລື້ອຍໆ

### ການປ່ຽນແປງເຫຼົ່ານີ້ມີຜົນກັບລູກຂອງຂ້ອຍບໍ?

ການປ່ຽນແປງ ໃນປີ 2026 ກ່ຽວກັບຂັ້ນຕອນການລົງທະບຽນຮຽນໃນໂຮງຮຽນຫຼວງຂອງຣັດ NSW ກ່ຽວຂ້ອງກັບທ່ານຖ້າ:

- ລູກຂອງທ່ານເປັນຊາວອາບໍຣິຈິໂນລ ແລະ/ຫຼື ນັກຮຽນຊາວເກາະ ທໍເຣສເຕຣດ ທີ່ມີບັນຫາກ່ຽວກັບ kinship, ພາສາ ຫຼື ວັດທະນະທຳ.
- ລູກຂອງທ່ານໄດ້ຮັບການດູແລນອກບ້ານ, ໄດ້ຮັບການປະກັນຕົວ ແລະ ນັກຮຽນທີ່ຍ້າຍອອກມາຈາກໂຮງຮຽນ ໃນສູນຍຸຕິທຳແລະສູນຄວບຄຸມໂຕຂອງເຍົາວະຊົນ ຫຼື ສະຖານດູແລ.
- ພໍ່ແມ່ຝ່າຍໃດຝ່າຍໜຶ່ງຂອງລູກທ່ານໄດ້ຮັບໃຊ້ ຫຼື ກຳລັງຮັບໃຊ້ຢູ່ໃນກອງກຳລັງປ້ອງກັນຊາດ ແລະ ອາດຈະໄດ້ຮັບຜົນກະທົບຈາກເງື່ອນໄຂການຍົກ ຍ້າຍເນື່ອງຈາກການປະຕິບັດວຽກງານຂອງກຳລັງປ້ອງກັນຊາດ ອອສເຕຣເລັຍ.

### ທຸກໂຮງຮຽນຈະຖືກກຳນົດໃຫ້ນຳໃຊ້ການປ່ຽນແປງ ເຫຼົ່ານີ້ບໍ?

ໂຮງຮຽນຈຳເປັນຕ້ອງໄດ້ນຳໃຊ້ການປ່ຽນແປງສຳ ລັບການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນສຳລັບ ນັກຮຽນທີ່ລົງທະບຽນສຳລັບເທີມ 1 ປີ 2026 ໂດຍຂຶ້ນກັບຄວາມພ້ອມຂອງຈຳນວນນັກຮຽນທີ່ລົງທະບຽນຮຽນໃນໂຮງຮຽນ.

ການປ່ຽນແປງຂັ້ນຕອນການລົງທະບຽນສຳລັບນັກ ຮຽນທີ່ບໍ່ແມ່ນໃນທ້ອງຖິ່ນຈະບໍ່ສົ່ງຜົນກະທົບຕໍ່ການມີສິດໄດ້ຮັບສຳລັບສະຖານທີ່ ຫຼື ໂຄງການສະເພາະ ເຊັ່ນ: ໂຮງຮຽນທີ່ມີການຄັດເລືອກຢ່າງເຕັມຮູບແບບ, ໂຮງຮຽນສຳລັບຈຸດປະສົງສະເພາະ (Schools for specific purposes (SSPs)), ໂຮງຮຽນການສຶກສາທາງໄກ ແລະໂຮງຮຽນທີ່ມີຫ້ອງຮຽນ ຫຼື ໂຄງການທີ່ມີຄວາມຕ້ອງການສະເພາະ (ຕົວຢ່າງ, ຫ້ອງຮຽນທີ່ໃຫ້ໂອກາດ, ກິລາສະເພາະທາງ ແລະ/ຫຼື ສິລະປະສ້າງສັນ ຫຼື ສິລະປະການສະແດງ). ໂຮງຮຽນເຫຼົ່ານີ້ມີຂັ້ນຕອນ, ເງື່ອນໄຂການມີສິດໄດ້ຮັບ ແລະ ການປະເມີນຜົນຂອງຕົນເອງ ແລະ ຈະສືບຕໍ່ປະຕິບັດຕາມຂະບວນການລົງທະບຽນໃນປະຈຸບັນຂອງຕົນຕໍ່ໄປ.

ໂຮງຮຽນເພດດຽວຕ້ອງນຳໃຊ້ການປ່ຽນແປງນີ້ຕາບໃດທີ່ເດັກທີ່ລົງທະບຽນເຂົ້າຮຽນໄດ້ຕາມເງື່ອນໄຂ ການມີສິດໄດ້ຮັບຂອງໂຮງຮຽນສຳລັບເພດນັ້ນ. ຈົ່ງຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງເພື່ອສອບຖາມວ່າ ການປ່ຽນແປງເຫຼົ່ານີ້ນຳໃຊ້ແນວໃດ.

### ໃບສະໝັກການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນ ຂອງຂ້ອຍຈະຖືກຮັບໂດຍອັດຕະໂນມັດບໍຖ້າລູກ ຂອງຂ້ອຍມີເງື່ອນໄຂທີ່ຖືກກັບການປັບປຸງໃໝ່?

ການປ່ຽນແປງເຫຼົ່ານີ້ບໍ່ໄດ້ຮັບປະກັນການລົງທະ ບຽນລູກຂອງທ່ານຢູ່ໃນໂຮງຮຽນຫຼວງທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນ. ໂຮງຮຽນທີ່ມີທັງການລົງທະບຽນທີ່ບໍ່ຢູ່ໃນທ້ອງຖິ່ນ ແລະທ້ອງຖິ່ນຈະພິຈາລະນາໃບສະໝັກຂອງທ່ານ. ໂຮງຮຽນທີ່ມີຄວາມຈຳກັດໃນການລົງທະບຽນທີ່ບໍ່ ແມ່ນຢູ່ໃນທ້ອງຖິ່ນຈະຈັດລຳດັບຄວາມສຳຄັນຂອງການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນສຳລັບ:

- ນັກຮຽນທີ່ມີຄວາມຕ້ອງການດ້ານການຮຽນຮູ້ ແລະ ຄວາມເປັນຢູ່ທີ່ດີ ຊຶ່ງຕ້ອງການການປັບຕົວທີ່ສົມເຫດສົມຜົນ ແລະ/ຫຼື ການຊ່ວຍເຫຼືອດ້ານການສຶກສາເພີ່ມເຕີມ, ລວມທັງ
  - ນັກສຶກສາຊາວອາບໍຣິຈິໂນລ ແລະ/ຫຼື ນັກຮຽນຊາວເກາະ ທໍເຣສເຕຣດ ທີ່ມີບັນຫາທາງວັດທະນະທຳ ແລະ/ຫຼື kinship connections
  - ຄວາມພິການ
  - ອາຍຸການພັດທະນາ
  - ປະສົບການທີ່ກະທົບກະເທືອນຈິດໃຈ
  - ຄວາມກັງວົນກ່ຽວກັບການປົກປ້ອງເດັກ
  - ຄວາມຕ້ອງການແລະສະຖານະການທາງການແພດ ແລະ ສ່ວນບຸກຄົນ
- ອ້າຍເອື້ອຍນ້ອງຂອງນັກຮຽນທີ່ກຳລັງຮຽນຢູ່ໃນ ໂຮງຮຽນນັ້ນ, ໂດຍທີ່ພີ່ນ້ອງຂອງນັກຮຽນໃນໜ່ວຍງານສະໜັບສະໜູນຈະໄດ້ຮັບບູລິມະສິດ
- ນັກຮຽນ Kindergarten ທີ່ພວມຈະເຂົ້າຮຽນແລະເຄີຍໄດ້ ເຂົ້າໂຮງຮຽນອະນຸບານຫຼວງທີ່ຕັ້ງຢູ່ໃນໂຮງຮຽນ.

ຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງສຳລັບຂໍ້ມູນເພີ່ມເຕີມ.

### ນີ້ໝາຍຄວາມວ່າຕັ້ງແຕ່ນີ້ເປັນຕົ້ນໄປ ຈະຮັບສະເພາະນັກຮຽນທີ່ກົງກັບເງື່ອນໄຂບູລິມະ ສິດຂອງການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນເທົ່ານັ້ນແມ່ນບໍ?

ບໍ່, ພໍ່ແມ່ສາມາດລົງທະບຽນລູກຂອງຕົນຢູ່ໃນໂຮງ ຮຽນຂອງລັດໃດໜຶ່ງກໍໄດ້ຖ້າຫາກວ່າເດັກນ້ອຍມີສິດເຂົ້າຮຽນແລະ ໂຮງຮຽນສາມາດຮອງຮັບເດັກໃນຂອບເຂດການລົງທະບຽນຂອງຕົນ. ໂຮງຮຽນທຸກແຫ່ງທີ່ມີຈຳນວນບ່ອນຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນທີ່ຈຳກັດຈະຕ້ອງພິຈາລະນາແລະຈັດລຳດັບຄວາມສຳຄັນ ຂອງການສະໝັກໃຫ້ກົງກັບເງື່ອນໄຂການລົງທະບຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນທີ່ຖືກປັບປຸງແລ້ວ.

### ໃບສະໝັກເຂົ້າຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນຂອງ ຂ້ອຍຄັ້ງກ່ອນຖືກປະຕິເສດ, ແຕ່ຕອນນີ້ລູກຂອງຂ້ອຍມີຄຸນສົມບັດທີ່ກົງກັບເງື່ອນໄຂທີ່ປັບປຸງແລ້ວ. ຂ້ອຍສາມາດສະໝັກໃໝ່ອີກໄດ້ບໍ?

ໄດ້. ຖ້າທ່ານສະໝັກໃຫ້ລູກຂອງທ່ານເຂົ້າຮຽນໃນໂຮງ ຮຽນນອກທ້ອງຖິ່ນໃນປີ 2026 ແລະໃບສະ ໝັກຖືກປະຕິເສດ, ທ່ານສາມາດສະໝັກໃໝ່ໄດ້ຖ້າລູກຂອງທ່ານມີຄຸນສົມບັດກົງກັບເງື່ອນໄຂການເຂົ້າຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນທີ່ປັບປຸງໃໝ່. ກະລຸນາປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນຫົວຂໍ້, "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍລົງທະບຽນລູກຂອງ ຂ້ອຍໄດ້ແນວໃດ?" ທີ່ຢູ່ຂ້າງລຸ່ມນີ້.

### ຂ້ອຍໄດ້ສົ່ງການສະແດງຄວາມສົນໃຈ (Expression of Interest (EOI)) ສຳລັບການປ່ຽນຜ່ານ Year 6 ຫາ 7ແລ້ວ ຂ້ອຍຈະສາມາດປ່ຽນບ່ອນທີ່ຂ້ອຍລົງທະບຽນຮຽນ ລູກຂອງຂ້ອຍໄດ້ບໍ?

ໄດ້. ຖ້າລູກຂອງທ່ານມີຄຸນສົມບັດກົງກັບເງື່ອນໄຂການລົງທະບຽນຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນທີ່ປັບປຸງໃໝ່, ທ່ານສາມາດສົ່ງໃບສະໝັກໃໝ່ໄປຫາໂຮງຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນທີ່ທ່ານຕ້ອງການໄດ້, ເຖິງແມ່ນວ່າທ່ານໄດ້ສົ່ງ EOI ສຳລັບການປ່ຽນຜ່ານ Year 6 ຫາ 7 ໄປແລ້ວກໍ່ຕາມ. ກະລຸນາປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນຫົວຂໍ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍລົງທະບຽນລູກຂອງ ຂ້ອຍໄດ້ແນວໃດ?" ທີ່ຢູ່ຂ້າງລຸ່ມນີ້.

### ຂ້ອຍຈະປ່ຽນບ່ອນທີ່ຂ້ອຍລົງທະບຽນລູກຂອງ ຂ້ອຍໄດ້ແນວໃດ?

ພໍ່ແມ່ ຫຼື ຜູ້ດູແລທີ່ຢາກລົງທະບຽນລູກໆຢູ່ໃນໂຮງຮຽນທີ່ບໍ່ ແມ່ນຢູ່ໃນທ້ອງຖິ່ນຕ້ອງປະຕິບັດຕາມຂັ້ນຕອນເຫຼົ່ານີ້ເພື່ອປ່ຽນແປງການລົງທະບຽນເຂົ້າຮຽນຂອງພວກເຂົາ:

#### ໃບສະໝັກການລົງທະບຽນທາງອອນໄລນ໌

1. ໄປທີ່ເວັບໄຊຕ໌ຂອງໂຮງຮຽນຫຼວງທີ່ທ່ານຕ້ອງການທີ່ຈະສະໝັກເຂົ້າຮຽນ, ຫຼັງຈາກນັ້ນໃຫ້ຄລິກໃສ່ການລົງທະບຽນ (enrolment) ໃນເມນູທາງເລືອກ.
2. ໃນໜ້າເວັບການລົງທະບຽນ, ພາຍໃຕ້ຫົວຂໍ້ "ວິທີການລົງທະບຽນ" (how to enrol) ໃຫ້ຄລິກໃສ່ລິ້ງກ໌ ການສະໝັກການລົງທະບຽນອອນໄລນ໌ (online enrolment application).
3. ເມື່ອທ່ານໄດ້ສົ່ງໃບສະໝັກເຂົ້າຮຽນແລ້ວ, ທາງໂຮງຮຽນອາດຈະມີຂໍ້ສະເໜີໃຫ້ທ່ານຊຶ່ງທ່ານຈະຕ້ອງຕອບຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານຖືກຮັບ, ໃຫ້ຕິດຕໍ່ໂຮງຮຽນທີ່ລູກຂອງທ່ານເຄີຍລົງທະບຽນກ່ອນໜ້ານີ້ເພື່ອຍົກເລີກການລົງທະບຽນນັ້ນ.

**ຄຳຮ້ອງສະໝັກແບບເຈັ້ຍ**

1. ຕິດຕໍ່ໂຮງຮຽນຫຼວງທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນເພື່ອ ສອບຖາມວ່າທາງໂຮງຮຽນສາມາດ ຮອງຮັບລູກ ຂອງທ່ານໄດ້ຫຼືບໍ່.
2. ຖ້າໂຮງຮຽນສາມາດຮອງຮັບລູກຂອງທ່ານໄດ້, ກະລຸນາຕື່ມແບບຟອມສະໝັກເປັນເຈັ້ຍ ໃໝ່ ຊຶ່ງທາງໂຮງຮຽນສາມາດຈັດຫາໃຫ້.
3. ເມື່ອທ່ານໄດ້ສົ່ງແບບຟອມສະໝັກເຂົ້າຮຽນແລ້ວ, ທາງໂຮງຮຽນອາດຈະມີຂໍ້ສະເໜີໃຫ້ ທ່ານ ຊຶ່ງທ່ານຈະຕ້ອງຕອບຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານຖືກຮັບ, ໃຫ້ຕິດຕໍ່ໂຮງຮຽນທີ່ລູກຂອງທ່ານເຄີຍລົງທະບຽນ ໄວ້ກ່ອນໜ້ານີ້ເພື່ອຖອນການລົງທະບຽນນັ້ນ.

## ຈະເປັນແນວໃດຖ້າຂ້ອຍບໍ່ມີທີ່ຢູ່ຖາວອນຫຼືເອກະ ສານລະບຸຕົວຕົນທີ່ຕ້ອງການ?

ມີບາງສະຖານະການທີ່ນັກຮຽນອາດຈະລົງທະບຽນໄດ້ໂດຍບໍ່ມີຫຼັກຖານຢືນຢັນທີ່ຢູ່. ສະຖານະການເຫຼົ່ານີ້ລວມມີ, ແຕ່ບໍ່ຈຳກັດພຽງບັນຫາທາງວັດທະນະທຳ, ລູກຂອງສະມາຊິກ ກອງກຳລັງປ້ອງກັນປະເທດ ແລະ ເດັກ ຫຼື ເຍົາວະຊົນທີ່ຢູ່ໃນການດູແລນອກບ້ານ, ຢູ່ໃນລະຫວ່າງການປະກັນຕົວ, ຫຼື ນັກຮຽນທີ່ຍ້າຍຈາກໂຮງຮຽນໄປສູນຍຸຕິທຳແລະສູນ ຄວບຄຸມໂຕຂອງເຍົາວະຊົນ ຫຼື ສະຖານດູແລ. ກະລຸນາຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງສຳລັບ ຂໍ້ມູນເພີ່ມເຕີມຖ້າຫາກວ່າທ່ານຮູ້ສຶກວ່າທີ່ກ່າວມານີ້ອາດຈະ ກ່ຽວຂ້ອງກັບສະຖານະການຂອງ ທ່ານ.

## ການປ່ຽນແປງນະໂຍບາຍ ແລະ ຂັ້ນຕອນການລົງທະບຽນຮຽນປີ 2025 ຍັງນຳໃຊ້ຢູ່ບໍ່?

ແມ່ນແລ້ວ. ການປ່ຽນແປງທີ່ນຳສະເໜີໃນປີ 2025 ຈະສືບຕໍ່ນຳໃຊ້ສຳລັບການລົງທະບຽນ ຮຽນໃນປີ 2026. ຊຶ່ງລວມມີ:

- ນັກຮຽນທຸກຄົນທີ່ຖືວີຊ່າອາໄສຊົ່ວຄາວສາມາດລົງ ທະບຽນຮຽນໃນໂຮງຮຽນຫຼວງ ທ້ອງຖິ່ນຂອງຕົນໄດ້, ໂດຍອີງຕາມທີ່ຢູ່ອາໄສຂອງພວກເຂົາ.
- ພີ່ນ້ອງຂອງນັກຮຽນທີ່ລົງທະບຽນຮຽນຢູ່ໃນໂຮງ ຮຽນຫຼວງໃນປັດຈຸບັນ ຈະໄດ້ຮັບບູ ລິມະສິດ ໃນການເຂົ້າຮຽນທີ່ບໍ່ແມ່ນຢູ່ໃນທ້ອງຖິ່ນ, ໂດຍ ໃຫ້ຄວາມສຳຄັນກັບອ້າຍນ້ອງ ຂອງນັກຮຽນໃນ ຫ້ອງຮຽນສະໜັບສະໜູນໃນໂຮງຮຽນຫຼັກທີ່ຈະ ໄດ້ຮັບສິດ.
- ລູກຂອງພະນັກງານໂຮງຮຽນສາມາດໄດ້ຮັບການພິຈາລະນາສຳລັບການເຂົ້າໂຮງຮຽນຫຼວງ ທີ່ບໍ່ແມ່ນຢູ່ ໃນທ້ອງຖິ່ນ.

ເພື່ອເອົາຂໍ້ມູນເພີ່ມເຕີມກ່ຽວກັບການປ່ຽນແປງເຫຼົ່ານີ້ ຫຼື ເພື່ອກວດເບິ່ງວ່າການປ່ຽນແປງ ດັ່ງກ່າວໃຊ້ກັບລູກຂອງທ່ານຫຼືບໍ່ ຈົ່ງຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງ.

## ຂ້ອຍຈະຊອກຫາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

**ສຳລັບການສອບຖາມກ່ຽວກັບການລົງທະບຽນ, ຈົ່ງໂອ້ລົມກັບໂຮງຮຽນທີ່ທ່ານຕ້ອງການ. ຊອກຫາລາຍລະອຽດການຕິດຕໍ່ຂອງໂຮງຮຽນຂອງທ່ານໄດ້ທີ່:**
education.nsw.gov.au/find-a-public-school

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການລົງທະບຽນ ໃນໂຮງຮຽນຫຼວງຂອງ ຣັດ NSW:**
education.nsw.gov.au/enrolment

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການລົງທະບຽນ ໃນໂຮງຮຽນຫຼວງຂອງ ຣັດ NSW ໃນຖານະເປັນຜູ້ຢູ່ຊົ່ວຄາວ:**
https://www.deinternational.nsw.edu.au/

**ສຳລັບການສອບຖາມຂໍ້ມູນທົ່ວໄປກ່ຽວກັບການລົງທະບຽນຮຽນ ຈົ່ງຕິດຕໍ່ຫ້ອງການ ຂອງ ກະຊວງສຶກສາ:** 1300 679 332

**ບໍລິການ ນາຍພາສາ ທາງໂທລະສັບ**

ຖ້າທ່ານ ຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການ ຕິດຕໍ່ໂຮງຮຽນ ຫຼື ກະຊວງສຶກສາ, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ທີ່ເບີ 13 14 50 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທລະ ສັບທີ່ທ່ານຕ້ອງການຕິດຕໍ່ ແລະ ຜູ້ຮັບສາຍກໍຈະ ຊອກເອົານາຍພາສາມາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.